# ຜົນສຳເລັດການຈັດຕັ້ງປະຕິບັດຫຼັກສູດຂັ້ນ ປ.1 ສົກຮຽນ 2019 - 2020

## ສື່ການຮຽນການສອນສະບັບປັບປຸງໃໝ່ສຳລັບຫ້ອງຮຽນ

### ຕົວເລກທີ່ຈັດຕັ້ງປະຕິບັດ

18 ແຂວງ,
148 ເມືອງ

ໂຮງຮຽນ
ປະຖົມສຶກສາ
8,747
ແຫ່ງ

ນັກຮຽນ
ຂັ້ນ ປ.1
162,342
ຄົນ

### ໄດ້ສະໜອງສື່ການຮຽນການສອນຫຍັງແດ່?

ປຶ້ມແບບຮຽນ 4 ວິຊາ 856,000 ຫົວ

ຄູ່ມືຄູ 7 ວິຊາ 146,300 ຫົວ

ຊຸດອຸປະກອນຄູ 9,105 ຊຸດ , ລວມມີ:

» ປຶ້ມນິທານ 351,000 ຫົວ
» ປຶ້ມອ່ານເສີມ 540,000 ຫົວ
» ຊຸດອຸປະກອນຄູສຳລັບໂຮງຮຽນຢູ່ເຂດຫ່າງໄກສອກຫຼີກ 650 ຊຸດ

## ຝຶກອົບຮົມຄູທົ່ວປະເທດ

### ມີການຝຶກອົບຮົມແນວໃດ?

ຄູຝຶກຫຼັກແຫຼ່ງ 59 ຄົນ (ຍິງ 36%)

ຄູຝຶກຂັ້ນແຂວງ 611 ຄົນ (ຍິງ 37%)

ຝຶກອົບຮົມ 6 ວັນ 483 ຄັ້ງ

### ມີໃຜແດ່ທີ່ໄດ້ຮັບການຝຶກອົບຮົມ?

ຄູຂັ້ນ ປ.1 ຈຳນວນ 9,662 ຄົນ (ຍິງ 60% )

ຜູ້ອຳນວຍການໂຮງຮຽນປະຖົມ 6,300 ຄົນ (ຍິງ 22%)

ຄູສຶກສານິເທດ ແລະ ພະນັກງານສະໜັບສະໜູນຂັ້ນເມືອງ 551 ຄົນ (ຍິງ 27%)

### ມີການຊ່ວຍເຫຼືອຫຍັງແດ່ໃຫ້ແກ່ຄູໃນໄລຍະສົກຮຽນ?

ຈັດຕັ້ງປະຕິບັດໃນ 32 ເມືອງເປົ້າໝາຍ

ໂຮງຮຽນທີ່ໄດ້ຮັບການສະໜັບສະໜູນ ແລະ ຕິດຕາມໂດຍໃຊ້ເຄື່ອງມືໂກໂບ (Kobo toolbox) 2,386 ແຫ່ງ

ວິດີໂອສຳລັບການພັດທະນາຄູ 20 ວິດີໂອກຳລັງຢູ່ໃນຂັ້ນຕອນການຜະລິດ

## ການເຜີຍແຜ່ຜ່ານສື່ຕ່າງໆ

### ລາຍການຮຽນຮູ້ຮ່ວມກັນແມ່ນຫຍັງ?

ລາຍການຮຽນຮູ້ຮ່ວມກັນແມ່ນລາຍການທີ່ມ່ວນຊື່ນຮູບແບບໃໝ່ທີ່ອອກແບບມາສະເພາະສຳລັບເດັກນ້ອຍຊັ້ນປະຖົມຄຽງຄູ່ກັບຫຼັກສູດສະບັບປັບປຸງໃໝ່

ອອກອາກາດຜ່ານ 2 ຊ່ອງໂທລະພາບແຫ່ງຊາດ

15 ຕອນ ລວມມີພາກກະຕູນອະນິເມຊັນ ແລະ ພາກເລົ່າເລື່ອງ

ຖືກເປີດຊົມ 55,000 ຄັ້ງໃນຢູທູບ

### ມີແຜ່ນພັບຈຳນວນເທົ່າໃດທີ່ໄດ້ແຈກຢາຍ?

39,321 ແຜ່ນພັບຫຼາຍຮູບແບບສຳລັບພະນັກງານສຶກສາ

### ການເຜີຍແຜ່ຜ່ານສື່ຕ່າງໆແມ່ນຫຍັງ?

ການປະກາດນຳໃຊ້ຫຼັກສູດໄດ້ເຜີຍແຜ່ຜ່ານສື່ໜັງສືພິມ, ໂທລະພາບ ແລະ ວິທະຍຸທັງໝົດ 83 ສື່

2 ໂຄສະນາທາງໂທລະພາບ ແລະ 1 ໂຄສະນາທາງວິທະຍຸ ພ້ອມກັບປະກາດທາງໂທລະໂຄ່ງບ້ານ 4,000 ບ້ານ

ລົງເນື້ອໃນຜ່ານສື່ອອນລາຍ ແລະ ເວັບໄຊເປົ້າໝາຍ 117 ຄັ້ງ



ຮູບພາບ: ນັກຮຽນພ້ອມກັບປຶ້ມແບບຮຽນສະບັບປັບປຸງໃໝ່



ຮູບພາບ: ການສົ່ງສື່ການຮຽນການສອນ ໂດຍລົດຈັກ

# ການປັບປຸງຜົນການຮຽນສຳລັບເດັກຍິງ ແລະ ຊາຍໃຫ້ຫຼາຍຂຶ້ນ

ນັບແຕ່ປີ 2015, ກະຊວງສຶກສາທິການ ແລະ ກິລາ (ສສກ) ໄດ້ພັດທະນາ ແລະ ຈັດຕັ້ງປະຕິບັດຫຼັກສູດຊັ້ນປະຖົມສະບັບປັບປຸງໃໝ່ ຄຽງຄູ່ກັບສື່ການຮຽນການສອນສະບັບປັບປຸງໃໝ່ສຳລັບນັກຮຽນ ແລະ ການຝຶກອົບຮົມໃໝ່ສຳລັບຄູສອນ. ການປັບປຸງສື່ການຮຽນການສອນໃນຫຼັກສູດສະບັບປັບປຸງໃໝ່ແມ່ນດຳເນີນໄປເທື່ອລະຂັ້ນຮຽນທຸກໆປີຈົນຮອດຂັ້ນ ປ.5 ເຊິ່ງຂັ້ນ ປ.1 ແມ່ນເລີ່ມຈັດຕັ້ງປະຕິບັດໃນເດືອນກັນຍາ 2019.

ຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່ໄດ້ປະກອບສ່ວນສຳຄັນເຂົ້າໃນການຍົກລະດັບຄຸນນະພາບຜົນການຮຽນຂອງເດັກນ້ອຍລາວ ເພາະວ່າຫຼັກສູດດັ່ງກ່າວນີ້ ໄດ້ຊ່ວຍເດັກນ້ອຍຍິງ ແລະ ຊາຍໝົດທຸກຄົນ ໂດຍສະເພາະແມ່ນເດັກນ້ອຍດ້ອຍໂອກາດດ້ານການສຶກສາ ໃຫ້ສາມາດຮຽນຈົບຊັ້ນປະຖົມສຶກສາຢ່າງມີຄຸນນະພາບ, ສາມາດອ່ານອອກຂຽນໄດ້, ສາມາດນັບເລກພື້ນຖານ ແລະ ມີທັກສະຊີວິດທີ່ຈຳເປັນອື່ນໆ. ໃນທີ່ສຸດແລ້ວ ຫຼັກສູດນີ້ຍັງຈະຊ່ວຍໃຫ້ເຂົາເຈົ້າມີໂອກາດໃນຊີວິດຫຼາຍຂຶ້ນ.

ສສກ ໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ, ສະຫະພາບເອີຣົບ ແລະ ລັດຖະບານສະຫະລັດອາເມລິກາ ໂດຍຜ່ານແຜນງານບີຄວາ.

## ຂໍ້ມູນການຈັດຕັ້ງປະຕິບັດຫຼັກສູດ

| | |
|---|---|
| ມັງກອນ-ເມສາ | ຜະລິດສື່ການຮຽນການສອນ |
| ພຶດສະພາ-ມິຖຸນາ | ຝຶກອົບຮົມໃຫ້ທີມຄູຝຶກຫຼັກແຫຼ່ງ ແລະ ຄູຝຶກປະຈຳແຂວງ |
| ພຶດສະພາ-ສິງຫາ | ແຈກຢາຍສື່ການຮຽນການສອນໃຫ້ໂຮງຮຽນ |
| ກໍລະກົດ-ສິງຫາ | ຝຶກອົບຮົມຄູ |
| ກັນຍາ | ເລີ່ມເປີດສົກຮຽນໃໝ່ກັບຫຼັກສູດສະບັບປັບປຸງໃໝ່ |

### ຫຼັກສູດສະບັບປັບປຸງໃໝ່ຕາມສົກຮຽນ

| | |
|---|---|
| **2019-2020** | ຂັ້ນ ປ. 1 |
| **2020-2021** | ຂັ້ນ ປ. 2 |
| **2021-2022** | ຂັ້ນ ປ. 3 |
| **2022-2023** | ຂັ້ນ ປ. 4 |
| **2023-2024** | ຂັ້ນ ປ. 5 |

Australian Aid

European Union

USAID FROM THE AMERICAN PEOPLE

ແຜນງານບີຄວາແມ່ນແຜນງານທີ່ນຳພາໂດຍລັດຖະບານລາວ ໂດຍການສະໜັບສະໜູນຂອງ
ລັດຖະບານອົດສະຕຣາລີ, ສະຫະພາບເອີຣົບ ແລະ ລັດຖະບານສະຫະລັດອາເມລິກາ